# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2016

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

**ສາລະບານ**


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 4 |
| ໃບລາຍງານຜົນການດຳເນີນງານ | 5 - 6 |
| ໃບລາຍງານຖານະການເງິນ | 7 - 9 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13 - 32 |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

## ຂໍ້ມູນທົ່ວໄປ

### ສາຂາ

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ" ) ລົງວັນທີ 19 ກຸມພາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2016, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ. (31 ທັນວາ 2015 ແມ່ນ 405,100,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

### ຜູ້ຈັດການທົ່ວໄປ ແລະ ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ແມ່ນທ່ານ Li Zhiyong, ຜູ້ຈັດການທົ່ວໄປ.

### ນັກກວດສອບບັນຊີ

ນັກກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

**ບົດລາຍງານຂອງຄະນະບໍລິຫານ**

ຄະນະບໍລິຫານຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງສາຂາ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດພາຍໃນປີ. ໃນການສ້າງເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງ ໄດ້ຖືກປະຕິບັດໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ;
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າສາຂາ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ຮັບປະກັນວ່າ ບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງຢ່າງຖືກຕ້ອງຢູ່ຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນັ້ນ ໃນການສ້າງເອກະສານລາຍງານການເງິນ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານ ມີຄວາມຍິນດີຖະແຫຼງການວ່າ ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸຕິທຳກ່ຽວກັບຖານະທາງການເງິນຂອງສາຂາ ນະວັນທີ 31 ທັນວາ 2016 ລວມທັງຜົນການດຳເນີນງານຂອງສາຂາ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ໂດຍອີງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຂອງຄະນະບໍລິຫານ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2017

EY
Building a better
working world

Ernst & Young Lao Company Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/18967928

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງ (ຕໍ່ໄປນີ້ເອີ້ນວ່າ "ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2016, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ລວມທັງສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

## *ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອດໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ"* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ("ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ") ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

## *ບັນຫາທີ່ຄວນເອົາໃຈໃສ່*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍຊ້ອນທ້າຍ ເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

## *ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການສ້າງເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາກ່ຽວກັບຄວາມສືບເນື່ອງໃນການດຳເນີນທຸລະກິດ, ຖ້າມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

EY
Building a better
working world

***ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ***

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບນັ້ນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ສາມາດພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Ltd

ການເງິນ ນະຄອນຫລວງວຽງຈັນ
ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2017

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| *ລຳດັບ* | *ລາຍການ* | *ບົດ ອະທິບາຍ ຊ້ອນທ້າຍ* | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|---|---|
| **A** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **34,160** | **6,553** |
| 1.1 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ ທະນາຄານອື່ນ | | 1,260 | 17 |
| 1.2 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກລູກຄ້າ | | 11,430 | 2,611 |
| 1.3 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ | | 21,470 | 3,925 |
| **2** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(9,339)** | **(1,505)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້ ທະນາຄານອື່ນ | | (8,543) | (1,378) |
| 2.2 | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້ລູກຄ້າ | | (795) | (127) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **24,821** | **5,048** |
| **3** | **ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | **1,820** | **180** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **5** | **(204)** | **(57)** |
| **5** | **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **6** | **926** | **394** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **27,363** | **5,565** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | | **243** | **489** |
| **7** | **ລາຍຈ່າຍບໍລິຫານ** | | **(17,873)** | **(15,400)** |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງ ພະນັກງານ | 7 | (10,240) | (7,076) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (7,633) | (8,324) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ** | | **(4,354)** | **(3,291)** |
| **9** | **ລາຍຈ່າຍອື່ນໆໃນການດຳເນີນງານ** | **9** | **(867)** | **(1,468)** |

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| *ລຳດັບ* | *ລາຍການ* | *ບົດ ອະທິບາຍ ຊ້ອນທ້າຍ* | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|---|---|
| III. | **ກຳໄລ/(ຂາດທຶນ) ກ່ອນຫັກອາກອນ** | | **4,512** | **(14,105)** |
| 10 | **ອາກອນກຳໄລ** | **22** | **-** | **-** |
| IV. | **ກຳໄລ/(ຂາດທຶນ) ຫຼັງຫັກອາກອນ** | | **4,512** | **(14,105)** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2016

| *ລຳດັບ* | *ຊັບສິນ* | *ບົດ ອະທິບາຍ ຊ້ອນທ້າຍ* | *31 ທັນວາ 2016 ລ້ານກີບ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ ("ທຫລ")** | | **386,016** | **372,123** |
| 1 | ເງິນສົດໃນຄັງ | 10 | 10,660 | 4,260 |
| 2 | ເງິນຝາກຢູ່ ທຫລ | 11 | 375,356 | 367,863 |
| **II** | **ເງິນຝາກຢູ່ທະນາຄານອື່ນ** | **12** | **410,493** | **37,775** |
| 1 | ເງິນຝາກກະແສລາຍວັນ | 12.1 | 164,973 | 37,775 |
| 2 | ເງິນຝາກປະຈຳ | 12.2 | 245,520 | - |
| **III** | **ການລົງທຶນໃນຫຼັກຊັບ** | | **409,200** | **407,400** |
| 1 | ຫຼັກຊັບຖືໄວ້ຈົນຄົບກຳນົດ | 13 | 409,200 | 407,400 |
| **IV** | **ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ** | **14** | **122,404** | **97,888** |
| **V** | **ຊັບສິນບັດຄົງທີ່** | | **10,056** | **14,385** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 15.1 | 9,808 | 13,072 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 15.2 | 248 | 1,313 |
| **VI** | **ຊັບສິນອື່ນໆ** | | **22,650** | **23,867** |
| 1 | ດອກເບ້ຍຄ້າງຮັບ | 16 | 5,031 | 4,198 |
| 2 | ຊັບສິນອື່ນໆ | 17 | 17,619 | 19,669 |
| | **ຊັບສິນທັງໝົດ** | | **1,360,819** | **953,438** |

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2016

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດ ອະທິບາຍ ຊ້ອນທ້າຍ* | *31 ທັນວາ 2016 ລ້ານກີບ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | | **532,197** | **437,400** |
| 1 | ເງິນຝາກກະແສລາຍວັນຈາກທະນາຄານອື່ນ | 18.1 | 81,900 | 30,000 |
| 2 | ເງິນຝາກປະຈຳຈາກທະນາຄານອື່ນ | 18.1 | 41,097 | - |
| 3 | ທຶນກູ້ຢືມ | 18.2 | 409,200 | 407,400 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **19** | **425,244** | **73,092** |
| 1 | ເງິນຝາກກະແສລາຍວັນ | | 293,628 | 51,676 |
| 2 | ເງິນຝາກປະຢັດ | | 32,665 | 18,183 |
| 3 | ເງິນຝາກປະຈຳ | | 98,951 | 3,233 |
| **III** | **ໜີ້ສິນອື່ນໆ** | | **6,647** | **50,972** |
| 1 | ດອກເບ້ຍຄ້າງຈ່າຍ | 20 | 2,361 | 1,416 |
| 2 | ໜີ້ສິນອື່ນໆ | 21 | 4,286 | 49,556 |
| | **ໜີ້ສິນທັງໝົດ** | | **964,088** | **561,464** |
| **IV** | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 23 | 405,100 | 405,100 |
| 2 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 14.2 | 1,224 | 979 |
| 3 | ຂາດທຶນສະສົມ | | (9,593) | (14,105) |
| | **ທຶນທັງໝົດ** | | **396,731** | **391,974** |
| | **ໜີ້ສິນ ແລະ ທຶນທັງໝົດ** | | **1,360,819** | **953,438** |

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2016

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|---|
| I | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | **1,090,209** | **1,019,429** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບເງິນກູ້ໃຫ້ແກ່ລູກຄ້າ | 1,090,209 | 1,019,429 |
| | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳທັງໝົດ** | **1,090,209** | **1,019,429** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ລ້ານກີບ* | *ຂາດທຶນສະສົມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2016** | **405,100** | **979** | **(14,105)** | **391,974** |
| ກຳໄລສຸດທິພາຍໃນປີ | - | - | 4,512 | 4,512 |
| ເງິນແຮທົ່ວໄປພາຍໃນປີ | - | 488 | - | 488 |
| ເກັບຄືນເງິນແຮທົ່ວໄປພາຍໃນປີ | - | (243) | - | (243) |
| **ຍອດເຫຼືອນະວັນທີ 31 ທັນວາ 2016** | **405,100** | **1,224** | **(9,593)** | **396,731** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| *ລາຍການ* | *ບົດ ອະທິບາຍ ຊ້ອນທ້າຍ* | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|---|
| **ກຳໄລ/(ຂາດທຶນ) ສຸດທິກ່ອນຫັກອາກອນ** | | **4,512** | **(14,105)** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | 4,354 | 3,291 |
| ລາຍຈ່າຍເງິນແຮສຳລັບຂາດທຶນສິນເຊື່ອ | 14.2 | 245 | 979 |
| **ກະແສເງິນສົດເຂົ້າ/(ອອກ) ກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **9,111** | **(9,835)** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນໃນການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 2,221 | (32,365) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (24,516) | (97,888) |
| ໜີ້ຕ້ອງຮັບຈາກດອກເບ້ຍຄ້າງຮັບ | | (833) | (4,198) |
| ຊັບສິນອື່ນໆ | | 2,050 | (427,069) |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນໃນການດຳເນີນງານ | | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | | 92,997 | 437,400 |
| ເງິນຝາກລູກຄ້າ ແລະ ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ | | 352,152 | 73,092 |
| ດອກເບ້ຍຄ້າງຈ່າຍ | | 945 | 1,416 |
| ໜີ້ສິນອື່ນໆ | | (45,270) | 49,556 |
| **ກະແສເງິນສົດສຸດທິຈາກ/(ໃຊ້ເຂົ້າ) ໃນກິດຈະກຳການດຳເນີນງານ** | | **388,857** | **(9,891)** |
| **ການເຄື່ອນໄຫວດ້ານການລົງທຶນ** | | | |
| ການຊື້ຊັບສິນບັດຄົງທີ່ ແລະ ອຸປະກອນ | | (25) | (17,676) |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນການເຄື່ອນໄຫວດ້ານການລົງທຶນ** | | **(25)** | **(17,676)** |
| **ການເຄື່ອນໄຫວດ້ານການເງິນ** | | | |
| ການປະກອບທຶນ | | - | 405,100 |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນການເຄື່ອນໄຫວດ້ານການເງິນ** | | **-** | **405,100** |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **388,832** | **377,533** |

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| *ລາຍການ* | *ບົດ ອະທິບາຍ ຊ້ອນທ້າຍ* | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|---|
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ/ໄລຍະ | | **377,533** | **-** |
| ຜົນກະທົບຈາກສ່ວນຜິດດ່ຽງການແລກປ່ຽນເງິນຕາຕ່າງປະເທດ | | **-** | **-** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ/ໄລຍະ | **24** | **766,365** | **377,533** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ
ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## 1. ຂໍ້ມູນກ່ຽວກັບສາຂາ

*ການສ້າງຕັ້ງ ແລະ ການເຄື່ອນໄຫວ*

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

*ທຶນຈົດທະບຽນ*

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2016, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ.

*ຜູ້ຈັດການທົ່ວໄປ*

ຜູ້ຈັດການທົ່ວໄປຂອງສາຂາ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2016 ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນທ່ານ Li Zhiyong.

*ທີ່ຕັ້ງ*

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2016 ມີ 27 ຄົນ (31 ທັນວາ 2015: 20).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1. ບົດຖະແຫຼງການໃນການປະຕິບັດ*

ຄະນະບໍລິຫານຂອງສາຂາ ຂໍຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

### *2.2. ພື້ນຖານໃນການກະກຽມ*

ສາຂາໄດ້ບັນທຶກບັນຊີເປັນເງິນກີບລາວ ("ກີບ) ແລະ ສ້າງເອກະສານລາຍງານການເງິນ ເປັນຫົວໜ່ວຍພັນກີບ ("ພັນກີບ) ຕາມດຳລັດ ເລກທີ02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 22 ມີນາ 2000 ແລະ ກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການອື່ນໆທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ,ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

### *2.3. ປີການບັນຊີ*

ປີການບັນຊີທຳອິດຂອງສາຂາແມ່ນເລີ່ມຈາກວັນທີ 26 ມີນາ 2015 ເຖິງວັນທີ 31 ທັນວາ 2015. ປີການບັນຊີຂອງປີຕໍ່ມາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນການດຳເນີນງານ ອີງຕາມການຕັ້ງໜີ້ຄ້າງຮັບຄ້າງຈ່າຍໂດຍນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກຳນົດໄວ້ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກຢຸດຕິກໍ່ຕໍ່ເມື່ອເງິນກູ້ທີ່ຖືກຈັດຂັ້ນເປັນໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍຊ້ອນທ້າຍເລກທີ 2.8 ຄວາມໝາຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຜູ້ບໍລິຫານເຊື່ອວ່າ ຜູ້ກູ້ຢືມແມ່ນບໍ່ມີຄວາມສາມາດຊຳລະຄືນດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍກ່ຽວກັບເງິນກູ້ແມ່ນໄດ້ຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານເມື່ອໄດ້ຮັບເງິນຕົວຈິງ.

### *2.5. ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ*

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີການຊຳລະການຄ້າ), ຄ່າທຳນຽມທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກທຸລະກິດເງິນກູ້.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຫລັກການເງິນສົດ.

### *2.6. ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕໍ່າກວ່າ ຫຼື ເທົ່າກັບ 30 ວັນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.7. ເງິນກູ້ໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ.

### *2.8. ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ*

ອີງຕາມຂໍ້ຕົກລົງ ເລກທີ 324/ທຫລ (BOL 324) ລົງວັນທີ 19 ເມສາ 2011, ສາຂາຕ້ອງໄດ້ຈັດຊັ້ນເງິນກູ້ ແລະ ສ້າງຄັງແຮສຳລັບຄ່າເສື່ອມມູນຄ່າຂອງເງິນກູ້, ດັ່ງນັ້ນ, ເງິນກູ້ທີ່ຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ທີ່ບໍ່ເກີດດອກອອກຜົນ ອີງຕາມສະຖານະພາບການຊຳລະເງິນທີ່ຍັງຄົງຄ້າງ ແລະ ປັດໄຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ຕິດຕາມພິເສດ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໃສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ອີງຕາມຂໍ້ຕົກລົງ ເລກທີ 324/ທຫລ ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ ແມ່ນໄດ້ຖືກກຳນົດໂດຍການຄິດໄລ່ເອົາຍອດເຫຼືອຄ້າງຊຳລະເງິນກູ້ແຕ່ລະລາຍການຄູນໃຫ້ອັດຕາເງິນແຮທີ່ເໝາະສຳລັບການຈັດຊັ້ນເງິນກູ້ນັ້ນໆ ຄືດັ່ງລຸ່ມນີ້:

| *ລຳດັບ* | *ການຈັດຊັ້ນໜີ້* | *ອັດຕາເງິນແຮສະເພາະ* |
|---|---|---|
| 1 | ໜີ້ຕໍ່າກວ່າມາດຕະຖານ | 20% |
| 2 | ໜີ້ສົງໃສ | 50% |
| 3 | ໜີ້ສູນ | 100% |

ສ່ວນປ່ຽນແປງຂອງເງິນແຮດັ່ງກາວ ແມ່ນຈະໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານເປັນ "ລາຍຈ່າຍເງິນແຮຄ່າເສື່ອມໜີ້ ຕ້ອງຮັບທວງຍາກ" ຫຼື ເກັບຄືນເງິນແຮຄ່າເສື່ອມໜີ້ຕ້ອງຮັບທວງຍາກ. ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກສະສົມ ແມ່ນຈະຖືກບັນທຶກລົງໃນໃບລາຍງານຖານະການເງິນໃນ " ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫຼັງຫັກເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ).

ລາຍລະອຽດກ່ຽວກັບການຈັດຊັ້ນໜີ້ ແລະ ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ ແລະ ມູນຄ່າຂອງເງິນແຮທີ່ບັນທຶກຕົວຈິງໂດຍສາຂາ ນະວັນທີ 31 ທັນວາ 2016 ແມ່ນໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍ 14.2.

### *2.9. ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ*

ອີງຕາມ ທຫລ 324 ສາຂາຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ໃນອັດຕາ 3.00 % ຂອງຍອດເຫຼືອເງິນກູ້ທີ່ຖືກຈັດຊັ້ນເປັນປະເພດໜີ້ຄວນເອົາໃຈໃສ່ ນະວັນທີສ້າງໃບລາຍງານຖານະການເງິນ ແລະ ຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ສຳລັບເງິນກູ້ທີ່ຖືກຈັດປະເພດເປັນ ໜີ້ປົກກະຕິ ແມ່ນອີງຕາມການແຈ້ງການຂອງທະນາຄານ ແຫ່ງ ສປປ ລາວ ທີ່ແຈ້ງອອກໃນແຕ່ລະປີ. ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016, ອັດຕາເງິນແຮທົ່ວໄປສຳລັບການສູນເສຍເງິນກູ້, ສຳລັບເງິນກູ້ທີ່ຈັດເປັນປະເພດ ໜີ້ປົກກະຕິ ແມ່ນຢູ່ໃນລະຫວ່າງ 0.5 % ຫາ 1.00 % ອີງຕາມໜັງສືທາງການ ເລກທີ 242 / ທຫລ ອອກໂດຍ ທະນາຄານແຫ່ງ ສປປ ລາວ, ລົງວັນທີ 02 ເມສາ 2011 ອີງຕາມຂໍ້ຕົກລົງດັ່ງກ່າວ ສາຂາໄດ້ກຳນົດອັດຕາເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ແມ່ນ 1.00 % ຂອງຍອດເຫຼືອຂອງໜີ້ປົກກະຕິ.

ສາຂາໄດ້ປະຕິບັດຕາມຂໍ້ຕົກລົງຂ້າງເທິງຂອງ ທະນາຄານແຫ່ງ ສປປ ລາວ ໃນການຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ສຳລັບໜີ້ປົກກະຕິ ແລະ ໜີ້ຄວນເອົາໃຈໃສ່ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.9. ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ*** (ຕໍ່)

ອີງຕາມກົດລະບຽບບັນຊີທີ່ກ່ຽວຂ້ອງ ເຊິ່ງວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ, ສ່ວນປ່ຽນແປງຂອງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ ແມ່ນຈະບັນທຶກລົງໃນໃບລາຍຜົນໄດ້ຮັບສະເພາະກິດຈະການສ່ວນເພີ່ມຂຶ້ນຂອງເງິນແຮຈະຖືກບັນທຶກເປັນ " ລາຍຈ່າຍອື່ນໆຈາການດຳເນີນງານ " ແລະ ການຫຼຸດລົງຂອງເງິນແຮດັ່ງກ່າວຈະຖືກບັນທຶກເປັນ " ລາຍຮັບອື່ນໆຈາການດຳເນີນງານ " ແລະ ຍອດເຫຼືອເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ຈະຖືກບັນທຶກຢູ່ໃນໃບລາຍງານຖານະການເງິນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ພາຍໃຕ້ພາກສ່ວນຂອງທຶນ ແລະ ຄັງສຳຮອງຕ່າງໆຂອງສາຂາ.

ລາຍລະອຽດຂອງການປ່ຽນແປງເງິນແຮຂອງໜີ້ທີ່ຖືກຈັດຊັ້ນຂອງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ ແມ່ນສະແດງຢູ່ໃນບົດອະທິບາຍຊ້ອນທ້າຍ ເລກທີ 14.2.

***2.10. ຊັບສິນບັດຄົງທີ່***

ຊັບສິນບັດຄົງທີ່ ລວມມີ ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕົບແຕ່ງການປັບປຸງອາຄານ, ຄອມພິວເຕີ ແລະ ພາຫະນະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີ ລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສິນບັດຄົງທີ່ສາມາດນຳໃຊ້ໄດ້.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

***2.11. ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ***

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ. ອັດຕາໃຊ້ການຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີ ມີດັ່ງນີ້:

| | |
|---|---|
| *ຊັບສິນບັດຄົງທີ່ມີຕົວຕົນ:* | |
| ອາຄານ ແລະ ການປັບປຸງອາຄານ | 5% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 20% |
| ພາຫະນະ | 20% |
| *ຊັບສິນບັດຄົງທີ່ບໍ່ມີຕົວຕົນ:* | |
| ລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດ | 50% |

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.12. ຄັງສະສົມຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ໂດຍອີງຕາມກົດລະບຽບກ່ຽວກັບຄວາມພຽງພໍຂອງທຶນເລກທີ 01/ທຫລ ລົງວັນທີ 28 ສິງຫາ 2011 ໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳໃນການຈັດຕັ້ງປະຕິບັດອື່ນໆ, ບັນດາທະນາຄານທຸລະກິດ ແມ່ນຕ້ອງໄດ້ສ້າງຄັງສະສົມຕາມລະບຽບການ ໃນອັດຕາລະຫວ່າງ 5% ຫາ 10% ຂອງກຳໄລຫລັງອາກອນ ໂດຍຂຶ້ນກັບການຕັດສິນໃຈຂອງຄະນະບໍລິຫານ. ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຄວນຖືກສ້າງຂຶ້ນພາຍໃຕ້ການຕົກລົງຂອງຄະນະບໍລິຫານ. ເນື່ອງຈາກວ່າສາຂາມີການຂາດທຶນສະສົມ, ສາຂາບໍ່ໄດ້ສ້າງຄັງສະສົມຕາມລະບຽບການສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016.

### *2.13. ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນ ໃນມື້ສ້າງໃບລາຍງານຖານະການເງິນ.(ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບ ໃນວັນທີ 31 ທັນວາ 2016 ແລະ 2015 ໄດ້ສະແດງຢູ່ຂ້າງລຸ່ມນີ້). ອີງຕາມຂໍ້ກົດລະບຽບສະບັບໃໝ່ເລກທີ 237/ທຫລ, ລົງວັນທີ 17 ພຶດສະພາ 2016, ເຊິ່ງອອກໂດຍ ທຫລ ໄດ້ລະບຸວ່າເລີ່ມແຕ່ປີທີ່ສິ້ນສຸດວັນທີ 31 ທັນວາ 2016 ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກການຕີມູນຄ່າດັ່ງກ່າວແມ່ນຖືກບັນທຶກເຂົ້າໃນບັນຊີທຶນໃນໃບລາຍງານຖານະການເງິນ, ແທນທີ່ຈະບັນທຶກໃນໃບລາຍງານຜົນການດຳເນີນງານຄືກັບປີຜ່ານມາ. ກົດລະບຽບດັ່ງກ່າວບໍ່ໄດ້ກຳນົດໃຫ້ປະຕິບັດຍ້ອນຫຼັງສຳລັບລາຍການຂອງປີຜ່ານມາ.

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("USD") | 8,184 | 8,148 |
| ບາດ ("THB") | 228.60 | 225.96 |
| ຢວນ ("CNY") | 1174 | 1,236 |

### *2.14. ອາກອນ*

ການຄິດໄລ່ຄັງແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນປີປະຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 24 ພຶດສະພາ 2016. ອີງຕາມກົດໝາຍສົ່ງເສີມການລົງທຶນ ແລະ ການບໍລິຫານການລົງທຶນຕ່າງປະເທດໃນ ສປປ ລາວ ເລກທີ 01/94 ລົງວັນທີ 14 ມີນາ 1994, ອັດຕາອາກອນນຳໃຊ້ສຳລັບພາກສ່ວນທີ່ເປັນການລົງທຶນຈາກຕ່າງປະເທດແມ່ນ 20% ຂອງກຳໄລຂອງສາຂາທີ່ລາຍງານພາຍໃຕ້ລະບົບບັນຊີລາວ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.15. ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫລັງອອກການຈະຖືກຈ່າຍໃຫ້ພະນັກງານທະນາຄານຜູ້ທີ່ບໍານານ ໂດຍພະແນກກອງທຶນສະຫວັດດີການສັງຄົມ ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫລັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫລັງອອກການ.

*ຜົນປະໂຫຍດຈາກການຢຸດຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກສອງກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2016, ບໍ່ມີພະນັກງານສາຂາຖືກໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງສາຂາ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | *2016* | *2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທະນາຄານອື່ນ | 1,260 | 17 |
| ເງິນກູ້ໃຫ້ລູກຄ້າ | 11,430 | 2,611 |
| ຫຼັກຊັບຖືໄວ້ຈົນຄົບກຳນົດ | 21,470 | 3,925 |
| | **34,160** | **6,553** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້:** | | |
| ທະນາຄານອື່ນ | (8,543) | (1,378) |
| ເງິນຝາກລູກຄ້າ | (795) | (127) |
| | **(9,338)** | **(1,505)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **24,822** | **5,048** |

**4. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ**

| | 2016<br>*ລ້ານກີບ* | 2015<br>*ລ້ານກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ຄ່າບໍລິການຊຳລະສະສາງ | 802 | 178 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 1,018 | 2 |
| | **1,820** | **180** |

**5. ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ**

| | 2016<br>*ລ້ານກີບ* | 2015<br>*ລ້ານກີບ* |
|---|---|---|
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ:** | | |
| ຄ່າທຳນຽມບໍລິການຊຳລະສະສາງ | 51 | 6 |
| ຄ່າທຳນຽມຊຳລະສະສາງໃຫ້ທະນາຄານກາງ | 5 | 2 |
| ຄ່າສະມາຊິກ | 148 | 49 |
| | **204** | **57** |

**6. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ**

| | 2016<br>*ລ້ານກີບ* | 2015<br>*ລ້ານກີບ* |
|---|---|---|
| ກຳໄລຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | 926 | 404 |
| ຂາດທຶນຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | - | (10) |
| | **926** | **394** |

**7. ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ**

| | 2016<br>*ລ້ານກີບ* | 2015<br>*ລ້ານກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 9,768 | 6,473 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 472 | 603 |
| | **10,240** | **7,076** |

## 8. ລາຍຈ່າຍບໍລິຫານອື່ນໆ

| | *2016* *ລ້ານກີບ* | *2015* *ລ້ານກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | 2,185 | 2,184 |
| ຄ່າບໍລິການພາຍນອກ | 163 | 339 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 284 | 66 |
| ໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 51 | 195 |
| ຄ່າໂທລະຄົມມະນາຄົມ | 801 | 716 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 1,199 | 3,496 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 813 | 227 |
| ຄ່າກວດສອບ ແລະ ນັກກົດໝາຍ | 125 | 102 |
| ລາຍຈ່າຍອື່ນໆ | 2,012 | 999 |
| | **7,633** | **8,324** |

## 9. ລາຍຈ່າຍອື່ນໆໃນການດຳເນີນງານ

| | *2016* *ລ້ານກີບ* | *2015* *ລ້ານກີບ* |
|---|---|---|
| ເງິນແຮທົ່ວໄປສຳລັບເງິນກູ້ໃຫ້ລູກຄ້າ *(ບົດອະທິບາຍເລກທີ 14.2)* | 486 | 1,468 |
| ລາຍຈ່າຍກອງທຶນປົກປ້ອງຜູ້ຝາກເງິນ | 117 | - |
| ລາຍຈ່າຍອື່ນໆ | 264 | - |
| | **867** | **1,468** |

## 10. ເງິນສົດໃນຄັງ

| | *31 ທັນວາ 2016* *ລ້ານກີບ* | *31 ທັນວາ 2015* *ລ້ານກີບ* |
|---|---|---|
| ເງິນສົດໃນຄັງທີ່ເປັນເງິນກີບ | 2,065 | 1,486 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 8,595 | 2,774 |
| | **10,660** | **4,260** |

## 11. ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")

| | 31 ທັນວາ 2016<br>ລ້ານກີບ | 31 ທັນວາ 2015<br>ລ້ານກີບ |
|---|---:|---:|
| ເງິນຝາກກະແສລາຍວັນ | 345,212 | 335,498 |
| ເງິນຝາກພາກບັງຄັບ | 30,139 | 4,740 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ | 5 | 27,625 |
| | **375,356** | **367,863** |

ເງິນຝາກຢູ່ ທຫລ ມີເງິນຝາກກະແສລາຍວັນ, ເງິນຝາກພາກບັງຄັບ, ເງິນຝາກຄ້ຳປະກັນທຶນຈົດທະບຽນ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກຳນົດຂອງ ທຫລ, ສາຂາຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 5.00% ສຳລັບເງິນກີບ ແລະ 10.00% ສຳລັບສະກຸນເງິນຕາຕ່າງປະເທດ, ເດືອນໜຶ່ງສອງຄັ້ງ, (2015: 5% ແລະ 10%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

ອີງຕາມດຳລັດເລກທີ 02/ນຍ ຂອງ ທຫລ, ສາຂາຂອງທະນາຄານຕ່າງປະເທດແມ່ນຖືກກຳນົດໃຫ້ຮັກສາເງິນຝາກພິເສດໄວ້ກັບ ທຫລ ເທົ່າກັບ 25% ຂອງທຶນຈົດທະບຽນທີ່ຖອກແລ້ວ ເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ສາຂາຖືກອະນຸຍາດໂດຍ ທຫລ ໂດຍໜັງສືທາງການເລກທີ 194/ກຄທ ລົງວັນທີ 18 ພຶດສະພາ 2015, ເລກທີ 239/ກຄທ ລົງວັນທີ 18 ມິຖຸນາ 2015 ແລະ 334/ກຄທ ລົງວັນທີ 19 ສິງຫາ 2016 ໃຫ້ຖອນເງິນຈາກບັນຊີເງິນຝາກເພື່ອເປັນທຶນໃນການດຳເນີນງານ. ນະວັນທີ 31 ທັນວາ 2016 ຍອດເຫຼືອເງິນຝາກພິເສດຂອງສາຂາມີ 5 ລ້ານກີບ.

## 12. ເງິນຝາກຢູ່ກັບທະນາຄານອື່ນ

### *12.1 ເງິນຝາກກະແສລາຍວັນ*

| | 31 ທັນວາ 2016<br>ລ້ານກີບ | 31 ທັນວາ 2015<br>ລ້ານກີບ |
|---|---:|---:|
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງ | 40 | 984 |
| **ເງິນກະແສລາຍວັນກັບທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ສາຂາຊາງໄຮ | 53,736 | 6,019 |
| ທະນາຄານແຫ່ງປະເທດຈີນ, ສາຂາຮົງກົງ | 238 | - |
| ທະນາຄານແຫ່ງປະເທດຈີນ, ສາຂາໄທ | 14,689 | 1,074 |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 17,430 | 28,889 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | 78,521 | - |
| ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 319 | 809 |
| | **164,973** | **37,775** |

**12. ເງິນຝາກຢູ່ກັບທະນາຄານອື່ນ (ຕໍ່)**

***12.2 ເງິນຝາກປະຈຳ***

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກປະຈຳກັບທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 245,520 | - |
| | **245,520** | **-** |

ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ ມີກຳນົດ 1 ເດືອນ ແລະ ມີອັດຕາດອກເບ້ຍ 1.64%-1.74% ຕໍ່ປີ.

**13. ຫຼັກຊັບຖືໄວ້ຈົນຄົບກຳນົດ**

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ພັນທະບັດອອກໂດຍ ທຫລ | 409,200 | 407,400 |
| | **409,200** | **407,400** |

ພັນທະບັດອອກໂດຍ ທຫລ ມີມູນຄ່າໜ້າບັດ 50,000,000 ໂດລາ, ມີກຳນົດ 5 ປີ ແລະ ມີອັດຕາດອກເບ້ຍ 5.56% ຕໍ່ປີ.

**14. ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ**

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ໃຫ້ລູກຄ້າ *(ບົດອະທິບາຍເລກທີ 14.1)* | 122,404 | 97,888 |
| ລົບ ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)* | - | - |
| | **122,404** | **97,888** |

| | *ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016* | *ສຳລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015* |
|---|---|---|
| | *ອັດຕາດອກເບ້ຍ % ຕໍ່ປີ* | *ອັດຕາດອກເບ້ຍ % ຕໍ່ປີ* |
| ເງິນກູ້ທີ່ເປັນສະກຸນເງິນກີບ | 8.00 - 11.00% | 11.00% |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 7.75% | 7.04% |

**14. ເງິນກູ້ໃຫ້ແກ່ລູກຄ້າຫຼັງຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)**

***14.1 ການວິເຄາະຂອງເງິນກູ້ໃຫ້ລູກຄ້າ***

*ການວິເຄາະຕາມສະກຸນເງິນ*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນກູ້ສະກຸນເງິນກີບ | 73,300 | 49,000 |
| ເງິນກູ້ສະກຸນເງິນໂດລາ | 49,104 | 48,888 |
| | **122,404** | **97,888** |

*ວິເຄາະຕາມສະຖານະເງິນກູ້*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 122,404 | 97,888 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - | - |
| | **122,404** | **97,888** |

*ວິເຄາະຕາມມື້ຄົບກຳນົດ*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 24,300 | - |
| ເງິນກູ້ໄລຍະກາງ | 98,104 | 97,888 |
| ເງິນກູ້ໄລຍະຍາວ | - | - |
| | **122,404** | **97,888** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ບໍລິສັດອຸດສາຫະກຳ | 24,300 | - |
| ບໍລິສັດກໍ່ສ້າງ | 49,000 | 49,000 |
| ບໍລິສັດກະສິກຳ | 49,104 | 48,888 |
| | **122,404** | **97,888** |

## 14. ເງິນກູ້ໃຫ້ແກ່ລູກຄ້າຫຼັງຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

### *14.2 ເງິນແຮສຳລັບໜີ້ເສຍ*

ການເຄື່ອນໄຫວຂອງເງິນແຮສຳລັບໜີ້ເສຍຂອງສາຂາສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016 ມີດັ່ງນີ້:

| | *ເງິນແຮສຳລັບເງິນກູ້ ບໍ່ເກີດດອກອອກຜົນ ລ້ານກີບ* | *ເງິນແຮທົ່ວໄປ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| **ນະວັນທີ 1 ມັງກອນ 2016** | - | 979 | **979** |
| ເງິນແຮພາຍໃນໄລຍະ | - | 486 | 486 |
| ເກັບຄືນເງິນແຮພາຍໃນໄລຍະ | - | (243) | (243) |
| ສ່ວນຜິດດ່ຽງເງິນຕາຕ່າງປະເທດ | - | 2 | 2 |
| **ນະວັນທີ 31 ທັນວາ 2016** | **-** | **1,224** | **1,224** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2016 ມີດັ່ງລຸ່ມນີ້:

| *ການຈັດຊັ້ນໜີ້* | *ຍອດເຫຼືອເງິນກູ້ ພັນກີບ* | *ເງິນແຮສຳລັບເງິນກູ້ ບໍ່ເກີດດອກອອກຜົນ ພັນກີບ* | *ເງິນແຮທົ່ວໄປ ພັນກີບ* | *ເງິນແຮທັງໝົດ ພັນກີບ* |
|---|---|---|---|---|
| ໜີ້ປົກກະຕິ | 122,404 | - | 1,224 | 1,224 |
| ໜີ້ຄວນເອົາໃຈໃສ່ | - | - | - | - |
| ໜີ້ຕໍ່າກວ່າມາດຕະຖານ | - | - | - | - |
| ໜີ້ສົງໃສ | - | - | - | - |
| ໜີ້ສູນ | - | - | - | - |
| **ລວມ** | **122,404** | **-** | **1,224** | **1,224** |

## 15. ຊັບສິນບັດຄົງທີ່

### *15.1 ຊັບສິນບັດຄົງທີ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງກົນແຕ່ງ ລ້ານກີບ* | *ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ມູນຄ່າເດີມ:** | | | | | |
| ນະວັນທີ 1 ມັງກອນ 2016 | 7,448 | 2,742 | 4,181 | 1,176 | 15,547 |
| ຮັບເຂົ້າເພີ່ມພາຍໃນປີ | - | - | 25 | - | 25 |
| ນະວັນທີ 31 ທັນວາ 2016 | 7,448 | 2,742 | 4,206 | 1,176 | 15,572 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2016 | 1,118 | 399 | 804 | 154 | 2,475 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 1,490 | 532 | 1,077 | 190 | 3,289 |
| ນະວັນທີ 31 ທັນວາ 2016 | 2,608 | 931 | 1,881 | 344 | 5,764 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 31 ທັນວາ 2015 | 6,330 | 2,343 | 3,377 | 1,022 | 13,072 |
| ນະວັນທີ 31 ທັນວາ 2016 | 4,840 | 1,811 | 2,325 | 832 | 9,808 |

### *15.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016 ມີດັ່ງລຸ່ມນີ້:

| | *ລາຍຈ່າຍກ່ອນການສ້າງຕັ້ງ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|
| **ມູນຄ່າເດີມ:** | | |
| ນະວັນທີ 1 ມັງກອນ 2016 | 2,129 | 2,129 |
| ຮັບເຂົ້າເພີ່ມພາຍໃນປີ | - | - |
| ນະວັນທີ 31 ທັນວາ 2016 | 2,129 | 2,129 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | |
| ນະວັນທີ 1 ມັງກອນ 2016 | 816 | 816 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 1,065 | 1,065 |
| ນະວັນທີ 31 ທັນວາ 2016 | 1,881 | 1,881 |
| **ມູນຄ່າສະສົມ:** | | |
| ນະວັນທີ 31 ທັນວາ 2015 | 1,313 | 1,313 |
| ນະວັນທີ 31 ທັນວາ 2016 | 248 | 248 |

**16. ດອກເບ້ຍຄ້າງຮັບ**

| | *31 ທັນວາ 2016* *ລ້ານກີບ* | *31 ທັນວາ 2015* *ລ້ານກີບ* |
|---|---|---|
| ດອກເບ້ຍຄ້າງຮັບຈາກເງິນຝາກຢູ່ທະນາຄານອື່ນ | 65 | 2 |
| ດອກເບ້ຍຄ້າງຮັບຈາກເງິນກູ້ໃຫ້ລູກຄ້າ | 340 | 271 |
| ດອກເບ້ຍຄ້າງຮັບຈາກຫຼັກຊັບຖືໄວ້ຈົນຄົບກຳນົດ | 4,547 | 3,925 |
| ດອກເບ້ຍຄ້າງຮັບຈາກເງິນຝາກປະຈຳຢູ່ທະນາຄານອື່ນ | 79 | - |
| | **5,031** | **4,198** |

**17. ຊັບສິນອື່ນໆ**

| | *31 ທັນວາ 2016* *ລ້ານກີບ* | *31 ທັນວາ 2015* *ລ້ານກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າ | 17,619 | 19,669 |
| | **17,619** | **19,669** |

**18. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ**

***18.1 ເງິນຝາກກະແສລາຍວັນ ແລະ ເງິນຝາກປະຈຳ***

| | *31 ທັນວາ 2016* *ລ້ານກີບ* | *31 ທັນວາ 2015* *ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນຈາກທະນາຄານອື່ນ** | | |
| ທະນາຄານ ເອເອັມແຊັດ (ລາວ) ຈຳກັດ | 81,900 | 30,000 |
| **ເງິນຝາກປະຈຳຈາກທະນາຄານອື່ນ** | | |
| ທະນາຄານ ເອເອັມແຊັດ (ລາວ) ຈຳກັດ | 41,097 | - |
| | **122,997** | **30,000** |

ເງິນຝາກປະຈຳຈາກທະນາຄານ ເອເອັມແຊັດ (ລາວ) ຈຳກັດ ມີກຳນົດເວລາ 3 ເດືອນ ແລະ ມີອັດຕາດອກເບ້ຍ 1.55% ຕໍ່ປີ.

***18.2 ທຶນກູ້ຢືມ***

| | *31 ທັນວາ 2016* *ລ້ານກີບ* | *31 ທັນວາ 2015* *ລ້ານກີບ* |
|---|---|---|
| **ທຶນກູ້ຢືມຈາກທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 409,200 | 407,400 |
| | **409,200** | **407,400** |

ທຶນກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ ແມ່ນເປັນເງິນໂດລາ, ມີກຳນົດ 5 ປີ ແລະ ມີອັດຕາດອກເບ້ຍ 2.41% ຕໍ່ປີ.

## 19. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນ** | | |
| - ເປັນເງິນກີບ | 5,745 | 2,630 |
| - ເປັນເງິນຕາຕ່າງປະເທດ | 287,883 | 49,046 |
| | **293,628** | **51,676** |
| **ເງິນຝາກປະຢັດ** | | |
| - ເປັນເງິນກີບ | 3,040 | 1,622 |
| - ເປັນເງິນຕາຕ່າງປະເທດ | 29,625 | 16,561 |
| | **32,665** | **18,183** |
| **ເງິນຝາກປະຈຳ** | | |
| - ເປັນເງິນກີບ | 2,659 | 1,093 |
| - ເປັນເງິນຕາຕ່າງປະເທດ | 96,292 | 2,140 |
| | **98,951** | **3,233** |
| | **425,244** | **73,092** |

ອັດຕາດອກເບ້ຍຂອງໜີ້ຕ້ອງສົ່ງໃຫ້ລູກຄ້າມີດັ່ງນີ້:

| | *2016* | *2015* |
|---|---|---|
| | *ອັດຕາດອກເບ້ຍ* | *ອັດຕາດອກເບ້ຍ* |
| ເງິນຝາກກະແສລາຍວັນເປັນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນກີບ | 1.10% | 1.00% |
| ເງິນຝາກປະຢັດເປັນໂດລາ | 1.25% | 1.25% |
| ເງິນຝາກປະຢັດເປັນບາດ | 0.50% | 0.50% |
| ເງິນຝາກປະຈຳເປັນກີບ | 3.00% - 6.50% | 3.00% - 9.00% |
| ເງິນຝາກປະຈຳເປັນໂດລາ | 2.00% - 6.25% | 2.00% - 6.25% |
| ເງິນຝາກປະຈຳເປັນບາດ | 0.75% - 4.50% | 0.75% - 4.50% |

## 20. ດອກເບ້ຍຄ້າງຈ່າຍ

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ດອກເບ້ຍຄ້າງຈ່າຍໃຫ້:** | | |
| ເງິນຝາກປະຈຳ | 330 | 38 |
| ສາຂາຢູ່ຕ່າງປະເທດ | 2,031 | 1,378 |
| | **2,361** | **1,416** |

## 21. ໜີ້ສິນອື່ນໆ

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ໜີ້ຕ້ອງສົ່ງໃຫ້ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 8 | 45,776 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 3,962 | 3,679 |
| ໜີ້ສິນອື່ນໆ | 316 | 101 |
| | **4,286** | **49,556** |

## 22. ອາກອນ

***ອາກອນກຳໄລ ("ອກລ")***

ສາຂາໄດ້ຫັກເງິນແຮໄວ້ສຳລັບອາກອນກຳໄລພາຍໃນປີ ອີງຕາມກົດໝາຍອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນກຳໄລອີງຕາມກົດໝາຍອາກອນເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ວັນທີ 24 ພຶດສະພາ 2016.

| | *2016* | *2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ກຳໄລ/(ຂາດທຶນ) ກ່ອນອາກອນ | 4,512 | (14,105) |
| ປຽບທຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | 169 | 745 |
| ຂາດທຶນຍົກມາຈາກປີຜ່ານມາ | (4,681) | - |
| | - | (13,360) |
| **ລາຍຮັບສຳລັບຫັກອາກອນພາຍໃຕ້ລະບົບບັນຊີລາວ** | - | - |
| **ລາຍຈ່າຍອາກອນກຳໄລ, ຕາມອັດຕາກົດໝາຍ 24%** | - | - |
| ອາກອນກຳໄລຕ້ອງມອບໃນຕົ້ນປີ/ໄລຍະ | - | - |
| ອາກອນກຳໄລຕ້ອງມອບພາຍໃນປີ/ໄລຍະ | - | - |
| **ອາກອນກຳໄລຕ້ອງມອບໃນທ້າຍປີ/ໄລຍະ** | - | - |

ລາຍການເສຍອາກອນຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

***ຂາດທຶນຍົກມາຈາກປີຜ່ານມາ***

ອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ເລກທີ 70/ສພຊ ລົງວັນທີ 15 ທັນວາ 2015, ມາດຕາ 40, ຂາດທຶນພາຍໃນປີທີ່ໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຮັບຮູ້ໂດຍເຈົ້າໜ້າທີ່ສ່ວຍສາອາກອນ ແມ່ນສາມາດຍົກຍອດຂາດທຶນດັ່ງກ່າວມາຫັກລ້າງກຳໄລໃນປີຕໍ່ມາໄດ້ສາມປີ. ເມື່ອຜ່ານຊ່ວງສາມປີແລ້ວຍອດຂາດທຶນທີ່ເຫຼືອບໍ່ອະນຸຍາດໃຫ້ນຳມາຫັກລົບອີກ. ນະວັນທີ 31 ທັນວາ 2016, ສາຂາມີຍອດຂາດທຶນສະສົມ 8,679 ລ້ານກີບ (ນະວັນທີ 31 ທັນວາ 2015: 13,360 ລ້ານກີບ) ທີ່ສາມາດນຳມາຫັກລົບກັບກຳໄລທີ່ຕ້ອງເສຍອາກອນໄດ້ໃນອະນາຄົດ.

ລາຍລະອຽດຂອງການຫັກລົບມີດັ່ງນີ້:

| *ປີເລີ່ມຕົ້ນ* | *ສາມາດນຳໃຊ້ໄດ້ເຖິງ* | *ມູນຄ່າຂາດທຶນ* | | *ນຳໃຊ້ເຖິງ ວັນທີ 31 ທັນວາ 2016* | *ຄ່າປັບໄໝ* | *ບໍ່ທັນນຳໃຊ້ນະວັນທີ 31 ທັນວາ 2016* |
|---|---|---|---|---|---|---|
| 2015 | 2018 | (13,360) | (*) | 4,681 | - | (8,679) |
| **ລວມ** | | **(13,360)** | | **4,681** | **-** | **(8,679)** |

(*) ມູນຄ່າຂາດທຶນທີ່ຄາດຄະເນໄວ້ໃນການແຈ້ງເສຍອາກອນສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ບໍ່ຖືກກວດໂດຍເຈົ້າໜ້າທີ່ສ່ວຍສາອາກອນຈົນເຖິງວັນທີອອກບົດລາຍງານ.

## 23. ທຶນຈົດທະບຽນທີ່ຖອກແລ້ວ

ການເຄື່ອນໄຫວ ທຶນຈົດທະບຽນຖອກແລ້ວພາຍໃນປີ ມີດັ່ງນີ້:

| | *2016* *ລ້ານກີບ* | *2015* *ລ້ານກີບ* |
|---|---|---|
| ຍອດຍົກມາ | 405,100 | - |
| ທຶນຈົດທະບຽນຖອກເພີ່ມພາຍໃນປີ/ໄລຍະ | - | 405,100 |
| **ຍອດເຫຼືອທ້າຍ** | **405,100** | **405,100** |

## 24. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31 ທັນວາ 2016* *ລ້ານກີບ* | *31 ທັນວາ 2015* *ລ້ານກີບ* |
|---|---|---|
| ເງິນສົດໃນຄັງ | 10,660 | 4,260 |
| ເງິນຝາກກະແສລາວັນກັບ ທຫລ | 345,212 | 335,498 |
| ເງິນຝາກກະແສລາຍວັນກັບທະນາຄານອື່ນ | 164,973 | 37,775 |
| ເງິນຝາກປະຈໍາກັບທະນາຄານອື່ນ | 245,520 | - |
| | **766,365** | **377,533** |

## 25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີບໍລິສັດແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນໍາກັນກັບສາຂາເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນໍາສາຂາ;

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສໍາຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ ຫຼວງ, ຫຼື ມີສິດທິອໍານາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງສາຂາ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

## 25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2016 ມີດັ່ງຕໍ່ໄປນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2016 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2015 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ທະນາຄານແມ່ | ເງິນຝາກກະແສລາຍວັນ | 17,430 | 28,889 |
| | | ການກູ້ຢືມ | (409,200) | (407,400) |
| | | ໜີ້ຕ້ອງສົ່ງອື່ນໆ | (8) | (45,776) |
| | | ເງິນຝາກປະຈຳ | 245,520 | - |
| ທະນາຄານແຫ່ງປະເທດຈີນ, ສາຂາຊາງໄຮ | ບໍລິສັດໃນເຄືອ | ເງິນຝາກກະແສລາວວັນ | 53,736 | 6,019 |
| ທະນາຄານແຫ່ງປະເທດຈີນ, ສາຂາຮົງກົງ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 238 | - |
| ທະນາຄານແຫ່ງປະເທດຈີນ, ສາຂາໄທ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 14,689 | 1,074 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 78,521 | - |

ລາຍການເຄື່ອນໄຫວສຳຄັນກັບບັນດາພາກສ່ວນທີ່ກ່ຽວຂ້ອງໃນໄລຍະ ມີດັ່ງລຸ່ມນີ້:

| | *2016 ລ້ານກີບ* | *2016 ລ້ານກີບ* |
|---|---|---|
| ລາຍຮັບດອກຈາກເງິນຝາກປະຈຳຢູ່ສຳນັກງານໃຫຍ່ | 1,087 | - |
| ລາຍຈ່າຍດອກເບ້ຍສຳລັບເງິນກູ້ຈາກສຳນັກງານໃຫຍ່ | (2,031) | 1,378 |
| ລາຍຈ່າຍໃນການນຳໃຊ້ລະບົບໃຫ້ສຳນັກງານໃຫຍ່ | (214) | - |

***ການເຄື່ອນໄຫວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະບໍລິຫານມີດັ່ງນີ້ :

| | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|
| ເງິນເດືອນ ແລະ ເງິນໂບນັດ | 2,512 | 1,527 |
| | **2,512** | **1,527** |

**26. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ**

ນະມື້ເຮັດບົດລາຍງານ ບໍ່ມີເຫດການ ຫຼື ສະຖານະການໃດເກີດຂຶ້ນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ
ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017